/

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ
ພະແນກເຕັກໂນໂລຊີ ແລະການສື່ສານແຂວງແຂວງ ເລກທີ 89 /ພຕສ
ອຸດົມໄຊ, ວັນທີ 02 ກຸມພາ 2024

# ແຈ້ງການ

**ເຖິງ: ທ່ານຫົວໜ້າຫ້ອງວ່າການເມືອງ 07 ເມືອງທີ່ນັບຖື.**
**ເລື່ອງ: ການຈັດຕັ້ງປະຕິບັດປິດ ເລກໝາຍໂທລະສັບ ຢູ່ພາຍໃນແຂວງອຸດົມໄຊ.**

- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຫ້ອງວ່າການແຂວງ ສະບັບເລກທີ 385/ຈຂ.ອຊ, ລົງວັນທີ 05 ພຶດສະພາ 2021;
- ອີງຕາມ ຄຳສັ່ງວ່າດ້ວຍການສືບຕໍ່ຂຶ້ນທະບຽນເລກໝາຍໂທລະສັບ ຢູ່ ສປປ ລາວ ສະບັບເລກທີ 2348/ກຕສ, ລົງວັນທີ 31 ສິງຫາ 2023;
- ອີງຕາມ ແຈ້ງການແນະນຳຂອງຫ້ອງວ່າການແຂວງອຸດົມໄຊເລກທີ່ 1089/ຫວກ, ລົງວັນທີ 11 ຕຸລາ 2023;
- ອີງຕາມ ແຈ້ງການຂອງອົງການຄົ້ມຄອງໂທລະຄົມມະນາຄົມ, ກະຊວງເຕັກໂນໂລຊີ ແລະ ການສື່ສານເລກທີ 070/ອຄທ, ລົງວັນທີ 23 ມັງກອນ2024;

ເພື່ອເຮັດໃຫ້ການຂຶ້ນທະບຽນເລກໝາຍໂທລະສັບໄດ້ສຳເລັດຕາມເປົ້າໝາຍ, ຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຫົວໜ້າຫ້ອງວ່າການ 7 ເມືອງ ຊ່ວຍອອກແຈ້ງການເຖິງນາຍບ້ານຢູ່ພາຍໃນເມືອງຂອງຕົນ ເພື່ອແຈ້ງໃຫ້ພໍ່, ແມ່ ປະຊາຊົນ ຮັບຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດການປິດທະບຽນເລກໝາຍໂທລະສັບທີ່ມີເລກລະຫັດ ຂຶ້ນຕົ້ນດ້ວຍ 020 ແລະ ເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 030 ທີ່ຕົນເອງນຳໃຊ້ແລ້ວ ແຕ່ຍັງບໍ່ທັນຂຶ້ນທະບຽນແມ່ນໃຫ້ຮີບຮ້ອນໄປຂຶ້ນທະບຽນຢູ່ສູນໃຫ້ບໍລິການລູກຄ້າຂອງແຕ່ລະເຄືອຂ່າຍໃນໂມງລັດຖະການ ຫຼື ທ່ານສາມາດຂຶ້ນທະບຽນດ້ວຍຕົນເອງດ້ວຍການດາວໂຫຼດ ແອັບພລິເຄຊັນ Lao. KYC ( 3 Grab app )ໄດ້ຕະຫຼອດ 24 ຊົ່ວໂມງ; ຖ້າຫາກວ່າເລກໝາຍໃດບໍ່ຂຶ້ນທະບຽນນຳໃຊ້ຖືກຕ້ອງແມ່ນທາງບໍລິສັດຜູ້ໃຫ້ບໍລິການໂທລະຄົມຈະໄດ້ປິດການນຳໃຊ້ເລກໝາຍດັ່ງກ່າວ ນັບແຕ່ວັນທີ 30 ມັງກອນເປັນຕົ້ນໄປ ຕາມແຈ້ງການຂອງອົງການຄົ້ມຄອງໂທລະຄົມ ເລກທີ່ 070/ອຄທ, ລົງວັນທີ 23 ມັງກອນ 2024 ແລະ ຖ້າກວດພົບເຫັນບຸກຄົນໃດ ບໍ່ປະຕິບັດຕາມແຈ້ງການສະບັບນີ້ຈະຖືກດຳເນີນມາດຕະການຕາມມາດຕາ 28 ຂໍ້ຕົກລົງວ່າດ້ວຍການຂຶ້ນທະບຽນເລກໝາຍໂທລະສັບເລກທີ່ 2347/ກຕສ, ລົງວັນທີ 30 ສິງຫາ 2023 ດັ່ງນີ້:

1) ຜູ້ນຳໃຊ້ເລກໝາຍໂທລະສັບ ນຳໃຊ້ເລກໝາຍໂດຍບໍ່ໄດ້ຂຶ້ນທະບຽນສຳເລັດ ແລະ ຖືກຕ້ອງຕາມລະບຽບການ ຈະຖືກປັບໃໝ **1.000.000 ກີບ/ເລກໝາຍ**;

2) ຜູ້ນຳໃຊ້ນຳໃຊ້ໝາຍເລກໂທລະສັບ ເພື່ອກໍ່ຄວາມຫວຸ້ນວາຍໃນສັງຄົມ ແລະ ສິ່ງພົນກະທົບຕໍ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ຈະຖືກປັບໃໝ່ **10.000.000ກີບ/ເລກໝາຍ;**

3) ຜູ້ນຳໃຊ້ນຳໃຊ້ໝາຍເລກໂທລະສັບ ມອບ ແລະ ໂອນເລກໝາຍໂທລະສັບຂອງຕົນທີ່ຂຶ້ນທະບຽນແລ້ວ ໃຫ້ບຸກຄົນອື່ນໂດຍບໍ່ຂຶ້ນທະບຽນຄືນໃໝ່ ຈະຖືກປັບໃໝ **1.000.000ກີບ/ເລກໝາຍ;**

4) ຜູ້ນຳໃຊ້ເລກໝາຍໂທລະສັບ ບໍ່ໃຫ້ການຮ່ວມມື ໃນການປະຕິບັດວຽກງານຂຶ້ນທະບຽນໝາຍເລກໂທລະສັບ ຈະຖືກປັບໃໝ **1.000.000ກີບ/ເລກໝາຍ;**

5) ຜູ້ນຳໃຊ້ເລກໝາຍໂທລະສັບ ປອມແປງເອກະສານ ຫຼື ຂໍ້ມູນ ເພື່ອມາຂຶ້ນທະບຽນເລກໝາຍໂທລະສັບ ຈະຖືກປັບໃໝ **1.000.000ກີບ/ເລກໝາຍ;**

6) ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຮັບຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ກຸ່ມຈັດຕັ້ງອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ **1.000.000ກີບ/ເລກໝາຍ.**

❖ **ໝາຍເຫດ:** ບ້ານໃດທີ່ມີໂທລະໂຄ່ງຂໍຄວາມຮ່ວມມືນຳນາຍບ້ານຊ່ວຍອຳນວຍຄວາມສະດວກປະກາດແຈ້ງການສະບັບນີ້ອອກທາງໂທລະໂຄ່ງບ້ານໃຫ້ປະຊາຊົນໃນບ້ານຂອງຕົນຮັບຮູ້ຢ່າງທົ່ວເຖິງ.
ວິທີການກວດເລກໝາຍຂອງທ່ານກົດ *1021# ໂທອອກ (ທຸກເຄືອຂ່າຍ) ເພື່ອກວດເລກໝາຍໂທລະສັບຂອງທ່ານດ້ວຍຕົນເອງວ່າ ເບີຂອງທ່ານໄດ້ຂຶ້ນທະບຽນແລ້ວຫຼືຍັງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຮັບຊາບ ແລະ ໃຫ້ຄວາມຮ່ວມມືນຳດ້ວຍ.

**ຫົວໜ້າພະແນກ**

ພະແນກ
ເຕັກໂນໂລຊີ
ການສື່ສານ

ສົມບຸນ ມະນີ